# ມິຊຊາສໍາລັບຜູ້ລ່ວງລັບ



**ພຣະວໍລະສານໂດຍນັກບຸນຍວງ (ຍວງ 11, 21-27)**

ໃນເວລານັ້ນ ນາງມາກາທາທູນພຣະເຢຊູເຈົ້າວ່າ: *ພຣະອົງເຈົ້າເອີຍ! ຖ້າວ່າພຣະອົງຢູ່ທີ່ນີ້ເວລານັ້ນ ນ້ອງຊາຍຂອງຂ້ານ້ອຍຄົງຈະບໍ່ຕາຍ. ແຕ່ຂ້ານ້ອຍຮູ້ຢູ່ດຽວນີ້ວ່າ ພຣະອົງວອນຂໍສິ່ງໃດນໍາພຣະເຈົ້າ, ພຣະເຈົ້າກໍຈະປະທານໃຫ້.* ພຣະເຢຊູເຈົ້າກ່າວວ່າ: *ນ້ອງຊາຍຂອງເຈົ້າຈະກັບເປັນຄືນມາ.* ນາງມາກາທາທູນຕອບວ່າ: *ຂ້ານ້ອຍຮູ້ດີວ່າ ນ້ອງຂ້ານ້ອຍຈະກັບເປັນຄືນມາໃນວັນສິ້ນພິພົບ.* ພຣະເຢຊູເຈົ້າກ່າວວ່າ: *ເຮົາຄືການກັບເປັນຄືນມາ ແລະແມ່ນຊີວິດ, ໃຜເຊື່ອໃນເຮົາ ແມ່ນວ່າຕາຍໄປແລ້ວ ກໍຈະກັບມີຊີວິດອີກ, ແລະທຸກຄົນທີ່ມີຊີວິດຢູ່ ແລະເຊື່ອໃນເຮົາ ຈະບໍ່ຕາຍເລີຍຕະຫລອດນິລັນດອນ. ເຈົ້າເຊື່ອຄໍາເວົ້ານີ້ບໍ?* ນາງມາກາທາທູນຕອບວ່າ: *ໂດຍ, ພຣະອົງເຈົ້າເອີຍ! ຂ້ານ້ອຍເຊື່ອວ່າ ພຣະອົງແມ່ນພຣະກຣິສໂຕ ພຣະບຸດຂອງພຣະເຈົ້າຜູ້ຊົງຊີວິດ ແລະໄດ້ສະເດັດມາໃນໂລກນີ້.*

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ຢວງ 11, 21-27**

ພວກເຮົາທຸກຄົນບໍ່ວ່າຈະເຊື່ອຖືສາດສະໜາໃດ ຫລືບໍ່ເຊື່ອຖືຫຍັງກໍຕາມ ພວກເຮົາລ້ວນແຕ່ເຂົ້າໃຈສັດຈະທຳຂອງຊີວິດທີ່ວ່າ: « ມີເກີດກໍຕ້ອງມີຕາຍ, ມີເລີ່ມຕົ້ນ ກໍຕ້ອງມີສິ້ນສຸດ ». ສັດຈະທຳນີ້ບອກໃຫ້ພວກເຮົາຮູ້ວ່າທຸກສິ່ງທີ່ຢູ່ໃນການເວລາຢູ່ເທິງໂລກນີ້ລ້ວນແຕ່ເປັນອະນິຈັງ, ບໍ່ຖາວອນ, ມີຂອບເຂດ. ແຕ່ຖ້າພວກເຮົາຢຸດຢູ່ນຳແນວຄິດນີ້ ຄວາມຕາຍສຳລັບພວກເຮົາກໍເປັນສິ່ງສຸດທ້າຍ ແລະເມື່ອຕາຍແລ້ວກໍບໍ່ມີຫຍັງເຫລືອອີກ. ພວກເຮົາບໍ່ມີຫຍັງຕ້ອງຫວັງ ຕ້ອງເປັນຫວ່ງອີກເລີຍ.

ແຕ່ວາຈາຂອງພຣະເຢຊູເຈົ້າໃນບົດພຣະວໍລະສານຂອງວັນນີ້ສອນພວກເຮົາຜ່ານທາງນາງມາກທາວ່າ: ໃຫ້ເຊື່ອໃນຕົວຂອງພຣະອົງຜູ້ເປັນການກັບເປັນຄືນມາແລະຊີວິດ. ຄວາມເຊື່ອນີ້ບໍ່ຢຸດຢູ່ໃນສິ່ງທີ່ພວກເຮົາເຫັນ ຄືການຈາກໄປຂອງຄົນທີ່ພວກເຮົາຮັກແພງ. ແຕ່ຄວາມເຊື່ອນີ້ເຮັດໃຫ້ພວກເຮົາຫວັງໃນສິ່ງທີ່ພວກເຮົາບໍ່ສາມາດເຫັນດ້ວຍສາຍຕາຂອງມະນຸດ ແຕ່ພວກເຮົາເຫັນດ້ວຍສາຍຕາແຫ່ງຄວາມເຊື່ອໃນອົງພຣະເຢຊູກຣິສໂຕເຈົ້າ ຜູ້ໄດ້ຕາຍແລະໄດ້ກັບເປັນຄືນມາໃນວັນທີສາມ.

ສຳລັບຜູ້ທີ່ເຊື່ອໃນພຣະອົງຄວາມຕາຍບໍ່ແມ່ນຈຸດສຸດທ້າຍແຕ່ເປັນຈຸດເລີ່ມຕົ້ນຂອງຊີວິດໃໝ່, ຊີວິດຮ່ວມກັບພຣະອົງຕະຫລອດໄປ ອັນແມ່ນຄວາມຫວັງຍອດປາດຖະໜາຂອງພວກເຮົາທຸກຄົນ.
ເພາະສະນັ້ນໃນວັນນີ້, ພຣະເຢຊູເຈົ້າໄດ້ບອກສອນນາງມາກທາກໍຄືບອກ ສອນພວກເຮົາແຕ່ລະຄົນໃຫ້ເຊື່ອໃນຕົວຂອງພຣະອົງຜູ້ເປັນການກັບເປັນຄືນມາແລະຊີວິດ. ເພາະມີແຕ່ຄວາມເຊື່ອເທົ່ານັ້ນທີ່ສາມາດບັນເທົາຄວາມເຈັບປວດຂອງພວກເຮົາ. ມີແຕ່ຄວາມເຊື່ອເທົ່ານັ້ນທີ່ເຮັດໃຫ້ພວກເຮົາມີຄວາມຫວັງ ແລະສືບຕໍ່ຊີວິດຂອງພວກເຮົາແຕ່ລະວັນຢູ່ເທິງໂລກນີ້ຈົນກວ່າພວກເຮົາຈະໄດ້ກັບຄືນເມືອຫາພຣະເຈົ້າ.

ຂໍໃຫ້ແສງສະຫວ່າງແຫ່ງວາຈາຂອງພຣະເຈົ້າໃນວັນນີ້ ຊ່ວຍພວກເຮົາໃຫ້ມີຄວາມເຊື່ອທີ່ໜັກແໜ້ນໃນອົງພຣະເຢຊູກຣິສໂຕ ເປັນຕົ້ນໃນເວລາແຫ່ງຄວາມເສົ້າໂສກສິ້ນຫວັງ ຂໍໃຫ້ພຣະອົງຈົ່ງເປັນບ່ອນເພິ່ງອີງແລະຄວາມຫວັງຂອງພວກເຮົາ. ເພື່ອວ່າພວກເຮົາຈະໄດ້ກ່າວຄືກັນກັບນາງມາກທາໃນວັນນີ້ວ່າ: *ພຣະອົງເຈົ້າເອີຍ! ຂ້າພະເຈົ້າເຊື່ອວ່າ ພຣະອົງແມ່ນພຣະກຣິສໂຕ ພຣະບຸດຂອງພຣະເຈົ້າຜູ້ຊົງຊີວິດ ແລະໄດ້ສະເດັດມາໃນໂລກນີ້.* ອາແມນ.

ຄຸນພໍ່ ອັງຕວນ ກຽດຕິສັກ